# BEQUAL

## ກອງທຶນນະວັດຕະກຳໃໝ່ດ້ານການສຶກສາ



ບົດນຳສະເໜີ ແລະ ຜົນໄດ້ຮັບໂດຍຫຍໍ້
ຂອງທັງ 15 ໂຄງການ

# ກອງທຶນນະວັດຕະກຳໃໝ່ດ້ານການສຶກສາແມ່ນຫຍັງ?



ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນສໍາລັບການສຶກສາຂັ້ນພື້ນໃນ ສປປ ລາວ ແມ່ນແຜນງານໄລຍະ 10 ປີ ທີ່ນໍາພາໂດຍລັດຖະບານລາວ ໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ແລະ ສະຫະພາບເອີຣົບ. ແຜນງານບີຄວາມຸ່ງຫວັງທີ່ຈະຊ່ວຍເດັກຍິງ ແລະ ເດັກຊາຍໃນໄວປະຖົມສຶກສາ, ໂດຍສະເພາະແມ່ນຜູ້ທີ່ດ້ອຍໂອກາດ ເພື່ອໃຫ້ເຂົາເຈົ້າສາມາດອ່ານອອກຂຽນໄດ້ ແລະສາມາດນັບເລກໄດ້ແລະ ເພື່ອໃຫ້ເຂົາເຈົ້າມີທັກສະໃນການດໍາລົງຊີວິດ.

ແຜນຍຸດທະສາດອີກອັນໜຶ່ງຂອງແຜນງານບີຄວາແມ່ນເພີ່ມການມີສ່ວນຮ່ວມ ແລະ ການເຂົ້າເຖິງການສຶກສາຊັ້ນປະຖົມ ເພື່ອທົດລອງນໍາໃຊ້ສິ່ງໃໝ່ ແລະ ກິດຈະກໍານະວັດຕະກໍາໃໝ່ ທີ່ສາມາດເສີມສ້າງຄວາມເຂັ້ມແຂງຂອງຂັ້ນແຂວງຂັ້ນເມືອງ ແລະ ຂັ້ນໂຮງຮຽນ ໃນການຄຸ້ມຄອງບໍລິຫານ, ການປະສານງານ ແລະ ການຈັດຕັ້ງປະຕິບັດກິດຈະກໍາການສຶກສາຮູບແບບໃໝ່ ໃນຂັ້ນທ້ອງຖິ່ນ.

ກອງທຶນນະວັດຕະກໍາໃໝ່ດ້ານການສຶກສາໄດ້ຖືກສ້າງຂຶ້ນເພື່ອຊຸກຍູ້ແນວຄວາມຄິດໃໝ່ ແລະ ກິດຈະກໍາທີ່ເປັນນະວັດຕະກໍາທີ່ສາມາດສ້າງຜົນກະທົບດ້ານບວກໃຫ້ແກ່ການດໍາເນີນການຈັດຕັ້ງປະຕິບັດການສຶກສາຂັ້ນພື້ນຖານ.

ຈຸດປະສົງແນວຄິດນີ້ກໍ່ເພື່ອເປັນການເຮັດວຽກຮ່ວມກັບກະຊວງສຶກສາທິການ ແລະ ກິລາ, ແລະ ພາກສ່ວນຕ່າງໆ ໃນຂັ້ນແຂວງ ແລະ ຂັ້ນເມືອງ ເພື່ອທົດລອງແນວທາງການຈັດຕັ້ງປະຕິບັດຮູບແບບໃໝ່ ເພື່ອເບິ່ງຄວາມເປັນໄປໄດ້ໃນການປະສົບຜົນສໍາເລັດ ແລະ ແທດເໝາະແກ່ການຜັນຂະຫຍາຍໃຫ້ກວ້າງຂວາງ. ນະວັດຕະກໍາໃໝ່ທີ່ປະສົບຜົນສໍາເລັດຫຼາຍ ຫຼື ໜ້ອຍ ສາມາດນໍາໄປຜັນຂະຫຍາຍຕໍ່ໄປ ແລະ ມີຜົນກະທົບທາງບວກຕໍ່ຫຼາຍໂຮງຮຽນ ແລະ ເດັກນ້ອຍຕື່ມອີກ.

ກອງທຶນນະວັດຕະກໍາໃໝ່ດ້ານການສຶກສາໄດ້ໃຫ້ທຶນແກ່ໜ່ວຍງານພາກລັດ, ພາກເອກະຊົນ, ບັນດາຫ້ອງການແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານ. ຈໍານວນງົບປະມານຂອງທຶນດັ່ງກ່າວມີຄວາມແຕກຕ່າງກັນ ເລີ່ມຈາກ 189,932,000 ກີບ ຫາ 1,079,280,000 ກີບ ແລະ ມີເວລາການຈັດຕັ້ງປະຕິບັດ ຢູ່ 14 ເດືອນ ຫາ 34 ເດືອນ.

## ນໍາສະເໜີໂຄງການຕ່າງໆ


ນະວັດຕະກໍາໃໝ່ ດ້ານວຽກງານສ້າງຄູ ໜ້າ 6-17

ການຄຸ້ມຄອງ - ບໍລິຫານ ໜ້າ 18-27

ການເຂົ້າເຖິງ ແລະ ການມີສ່ວນຮ່ວມ ໜ້າ 28 -35

# ຂັ້ນຕອນ**ການຄັດເລືອກ**

ການສະໜອງທຶນນະວັດຕະກຳໃໝ່ດ້ານການສຶກສາແມ່ນອີງໃສ່ຫຼັກການທີ່ຈະແຈ້ງ ແລະ ຂັ້ນຕອນການສະໝັກແບບແຂ່ງຂັນ.

**01 ບົດສະເໜີໂຄງການໂດຍຫຍໍ້**

ຜູ້ສະໝັກຂໍທຶນແມ່ນສົ່ງບົດສະເໜີໂຄງການໂດຍຫຍໍ້ໂດຍການນຳໃຊ້ຮ່າງເອກະສານທີ່ເປັນເອກະພາບກັນ

**02 ການຄັດເລືອກ**

ບົດສະເໜີໂຄງການໂດຍຫຍໍ້ໄດ້ຮັບການກວດກາຕາມເງື່ອນໄຂການຄັດເລືອກ

**03 ບົດສະເໜີໂຄງການ**

ຜູ້ສະໝັກທີ່ໄດ້ຮັບການຄັດເລືອກຈະສົ່ງບົດສະເໜີໂຄງການສະບັບສົມບູນ

**04 ການປະເມີນ**

ບົດສະເໜີໂຄງການຈະຖືກປະເມີນເພື່ອຄົ້ນຫາແນວຄວາມຄິດໃໝ່, ດ້ານຄຸນນະພາບ, ການໃຊ້ຈ່າຍ ແລະ ຄວາມຍືນຍົງ

# ເງື່ອນໄຂ**ການຄັດເລືອກ** ດ້ານວິຊາການຂອງ**ກອງທຶນນະວັດຕະກຳໃໝ່ດ້ານການສຶກສາ**

| | ສັດສ່ວນໂຄງການຕາມຫົວຂໍ້ |
|---|---|
| ນະວັດຕະກຳໃໝ່, ຜົນກະທົບ ແລະ ຄວາມກ່ຽວຂ້ອງ | 35% |
| ຄວາມໜ້າເຊື່ອຖື ແລະ ຄວາມຍືນຍົງ | 25% |
| ການນຳເອົາໄປຜັນຂະຫຍາຍ ແລະ ປະສິດທິພາບດ້ານການລົງທຶນ | 20% |
| ຄວາມເປັນເຈົ້າການ ແລະ ພັນທະຮັບຜິດຊອບ | 20% |

# ສະຖິຕິດ້ານງົບປະມານ

ຈຳນວນງົບປະມານລວມຂອງໂຄງການນະວັດຕະກຳໃໝ່ດ້ານການສຶກສາ: **7,963,798,400** ກີບ







# ຜູ້ໄດ້ຮັບຜົນປະໂຫຍດ



| | | | | | |
|---|---|---|---|---|---|
| 346 ໂຮງຮຽນ | 28,817 ນັກຮຽນ (51% ຍິງ) | 1,371 (54% ຍິງ) ຄູສອນ 318 (10%) ອຳນວຍການ | 256 (19% ຍິງ) ຫ້ອງການ ສຶກສາທິການ ແລະ ກິລາເມືອງ | 207 (29% ຍິງ) ພະແນກ ສຶກສາທິການ ແລະ ກິລາແຂວງ | 276 (17% ຍິງ) ຄະນະ ພັດທະນາສຶກສາ ຂັ້ນບ້ານ |

# ສະຖານທີ່ຂອງກິດຈະກຳທຶນນະວັດຕະກຳໃໝ່ດ້ານການສຶກສາ ຕາມຫົວຂໍ້ພັດທະນາ



# ຍົກສູງທັກສະດ້ານພາສາລາວຂອງເດັກຊັ້ນປະຖົມສຶກສາ

ພະແນກ ສຶກສາທິການ ແລະ ກິລາ ແຂວງຊຽງຂວາງ

ເມືອງຄູນ, ແຂວງຊຽງຂວາງ

29 ເດືອນ

ກີບ 467,637,000

## ສິ່ງທ້າທາຍທີ່ຕ້ອງໄດ້ແກ້ໄຂ

- ຜົນການຮຽນພາສາລາວຍັງຕ່ຳ ເນື່ອງມາຈາກຄູສອນຍັງບໍ່ທັນມີທັກສະພຽງພໍ ແລະ ຍັງຂາດການຝຶກອົບຮົມໃນການສອນທັກສະຫຼັກທັງ 4 ທັກສະໃນການຮຽນພາສາ (ທັກສະດ້ານການອ່ານ, ການຂຽນ, ການຟັງ ແລະ ການເວົ້າ).

## ເປົ້າໝາຍ

- ເພີ່ມການຮຽນຮູ້ພາສາລາວໃຫ້ນັກຮຽນທີ່ເວົ້າພາສາລາວ ແລະ ນັກຮຽນຊົນເຜົ່າ.

## ຈຸດປະສົງ

- ຈັດການຝຶກອົບຮົມ, ສະໜອງວັດຖຸອຸປະກອນໃນການຮຽນການສອນໃຫ້ແກ່ຄູສອນ ເພື່ອສ້າງທັກສະໃນການສອນພາສາລາວ
- ສະໜັບສະໜູນຊ່ວຍເຫຼືອຄູໃນການແຕ່ງບົດສອນ ແລະ ການພັດທະນາປັບປຸງອຸປະກອນໃນການສອນ ເພື່ອເຮັດໃຫ້ບົດຮຽນພາສາລາວມີຄວາມເໝາະສົມ ແລະ ສາມາດດຶງດູດນັກຮຽນໄດ້ດີ
- ປັບປຸງລະດັບຜົນການຮຽນທົ່ວໄປຂອງນັກຮຽນຂັ້ນປະຖົມສຶກສາໃຫ້ດີຂຶ້ນ.

## ນະວັດຕະກຳ

- ສົ່ງເສີມການພັດທະນາທາງດ້ານການຜະລິດສື່ການຮຽນການສອນແບບນະວັດຕະກຳໃໝ່ ໂດຍການໝູນໃຊ້ວັດຖຸທີ່ມີຢູ່ໃນທ້ອງຖິ່ນ
- ນຳໃຊ້ເທັກນິກທີ່ເນັ້ນໃສ່ການປະຕິບັດຕົວຈິງໃນການສອນພາສາລາວ.








## ຜົນໄດ້ຮັບ

- ໄດ້ມີການຈັດສະພາບແວດລ້ອມການຮຽນຮູ້ທີ່ເປັນມິດຕໍ່ເດັກພາຍໃນຫ້ອງຮຽນ ໂດຍການນໍາໃຊ້ເຄື່ອງມື ຫຼື ສິ່ງປະດິດປະຈັກຕາ ທີ່ອອກແບບມາເພື່ອສົ່ງເສີມການຮຽນຮູ້ຂອງນັກຮຽນ ແລະ ການທະນຸຮັກສານໍາໃຊ້ຕົວໜັງສື ແລະ ຄໍາສັບພາສາລາວ
- ການປະເມີນຄັ້ງສຸດທ້າຍໄດ້ສະແດງໃຫ້ເຫັນວ່າ ຄູສອນຈໍານວນ 85% ສາມາດນໍາໃຊ້ບົດຮຽນຈາກການຝຶກອົບຮົມເຂົ້າໃນການສອນຕົວຈິງໄດ້ຢ່າງມີປະສິດທິພາບ.
- ຜົນການຮຽນພາສາລາວຂອງນັກຮຽນແມ່ນໄດ້ເພີ່ມຂຶ້ນ 24%.

## ແຜນຕໍ່ໜ້າ

- ບັນດາໂຮງຮຽນເປົ້າໝາຍໄດ້ສ້າງແຜນປະຕິບັດໃນຕໍ່ໜ້າ ເພື່ອສືບຕໍ່ນໍາໃຊ້ບັນດາເທັກນິກການສອນໃໝ່ນີ້ເຂົ້າໃນການສອນ ເພື່ອສຸມໃສ່ການປັບປຸງຄຸນນະພາບການຮຽນ
- ຫ້ອງການສຶກສາທິການ ແລະ ກິລາເມືອງຄູນ ໄດ້ວາງແຜນເພື່ອຜັນຂະຫຍາຍໂຄງການນີ້ອອກໄປຍັງໂຮງຮຽນອື່ນໆ ສົມທົບກັບການຖອດຖອນບົດຮຽນຈາກການທົດລອງປະຕິບັດຄັ້ງນີ້.

# ປັບປຸງຄຸນນະພາບການຮຽນ - ການສອນວິຊາພາສາລາວ ຊັ້ນປະຖົມຂັ້ນ ປ1-ປ3 ຂອງໂຮງຮຽນທີ່ມີນັກຮຽນຊົນເຜົ່າ

ຫ້ອງການສຶກສາທິການ ແລະ ກິລາ ເມືອງຕົ້ນເຜີ້ງ

ເມືອງຕົ້ນເຜີ້ງ, ແຂວງບໍ່ແກ້ວ

17 ເດືອນ

ກີບ 259,690,000

## ສິ່ງທ້າທາຍທີ່ຕ້ອງໄດ້ແກ້ໄຂ

- ຄວາມຮູ້ພາສາລາວໃນລະດັບຕົ້ນໆຂອງເດັກຊົນເຜົ່າແມ່ນຢູ່ໃນລະດັບຕ່ຳ ເຊິ່ງມັນໄດ້ສົ່ງຜົນກະທົບຕໍ່ການຮຽນຮູ້ສິ່ງໃໝ່ໃນວິຊາອື່ນໆ ໃນໂຮງຮຽນປະຖົມ.

## ເປົ້າໝາຍ

- ເພື່ອຍົກລະດັບການຮຽນພາສາລາວໃນຂັ້ນຮຽນເລີ່ມຕົ້ນຂອງເດັກນ້ອຍຊົນເຜົ່າ ເພື່ອເພີ່ມຜົນການຮຽນຂອງເດັກນັກຮຽນໃຫ້ເພີ່ມຂຶ້ນໃນທຸກໆວິຊາຮຽນ.

## ຈຸດປະສົງ

- ເພື່ອຍົກສູງຄຸນນະພາບທັກສະຂອງຄູສອນໃນການສອນພາສາລາວໃຫ້ແກ່ນັກຮຽນຊົນເຜົ່າ ໂດຍສະເພາະການແຕ່ງບົດສອນ, ການວາງແຜນການສອນ, ການສອນແບບປະຕິບັດຕົວຈິງ ແລະ ການຜະລິດສື່ການຮຽນການສອນດ້ວຍການນຳໃຊ້ວັດຖຸທີ່ຫາໄດ້ໃນທ້ອງຖິ່ນ
- ເສີມສ້າງທັກສະຂອງຜູ້ອຳນວຍການໂຮງຮຽນໃນການຊີ້ນຳ ແລະ ນຳພາຄູສອນໃນການສອນວິຊາພາສາລາວ ແລະ ປຸກລະດົມຊຸກຍູ້ພໍ່ແມ່ນັກຮຽນຊົນເຜົ່າເພື່ອສົ່ງເສີມການຮຽນພາສາລາວຂອງເດັກນ້ອຍ
- ສ້າງຂີດຄວາມສາມາດແບບຕໍ່ເນື່ອງຈາກຂັ້ນເມືອງລົງສູ່ຂັ້ນບ້ານ, ຄະນະພັດທະນາການສຶກສາຂັ້ນບ້ານ ແລະ ຊຸມຊົນອ້ອມຂ້າງ ເພື່ອຮັບປະກັນການຊຸກຍູ້ສະໜັບສະໜູນແບບກວ້າງຂວາງໃຫ້ແກ່ຜູ້ທີ່ບໍ່ໄດ້ເວົ້າພາສາລາວເປັນພາສາທຳອິດ.

## ນະວັດຕະກຳ

- ການຊຸກຍູ້ຕິດຕາມການສອນແບບໃໝ່ ແລະ ນັກຮຽນ ແລະ ເຄື່ອງມືວັດປະເມີນຜົນໄດ້ຖືກສ້າງຂຶ້ນເພື່ອເປັນເຄື່ອງມືໃນການຕິດຕາມຄວາມຄືບໜ້າຂອງການຮຽນການສອນ
- ໄດ້ສ້າງຄູ່ມືແນະນຳເສີມເພື່ອຊ່ວຍຄູໃນການສ້າງແຜນການສອນ.









## ຜົນໄດ້ຮັບ

- ການຝຶກອົບຮົມ ແລະ ການຕິດຕາມຊ່ວຍເຫຼືອຄູສອນແຕ່ຊັ້ນປ.1 ຫາຊັ້ນປ.3 ແມ່ນໄດ້ຮັບຜົນສໍາເລັດດີ ເຊິ່ງໄດ້ເຮັດໃຫ້ມີການຂະຫຍາຍໄປສູ່ການສອນໃນຊັ້ນປ.4 ປລະ ຊັ້ນປ.5 ໃນປີທີ 2 ຂອງໂຄງການ
- ການປະເມີນທ້າຍໂຄງການກ່ຽວກັບຜົນການສອນຂອງຄູໄດ້ຊີ້ໃຫ້ເຫັນວ່າ ຄູສອນໄດ້ນໍາໃຊ້ທັກສະເຫຼົ່ານີ້ປະກອບໃນການສອນຕົວຈິງ ມີຈໍານວນ 60% ແມ່ນຢູ່ໃນເກນດີຫຼາຍ ແລະ 34% ແມ່ນຢູ່ໃນເກນດີປານກາງ.

## ແຜນຕໍ່ໜ້າ

- ຫ້ອງການສຶກສາທິການ ແລະ ກິລາເມືອງໄດ້ມີແຜນ ເພື່ອສືບຕໍ່ການໃຫ້ການຕິດຕາມຊຸກຍູ້ການສອນໃນບັນດາໂຮງຮຽນເປົ້າໝາຍ ໂດຍການນໍາໃຊ້ທຶນບໍລິຫານຂອງຫ້ອງການ
- ຂະບວນການຊ່ວຍເຫຼືອທາງດ້ານວິຊາການ ແມ່ນຈະໃຊ້ວິທີການປະຕິບັດຮູບແບບເກົ່ານີ້ ແລະ ໃຊ້ທີມງານຝຶກອົບຮົມເກົ່າ
- ຈະໃຫ້ການຊຸກຍູ້ຕິດຕາມແກ່ໂຮງຮຽນເປົ້າໝາຍ ໂຮງຮຽນລະ 1 ຄັ້ງ ຕໍ່ 1 ພາກຮຽນ
- ຫ້ອງການສຶກສາທິການ ແລະ ກິລາເມືອງ ມີແຜນຜັນຂະຫຍາຍແນວທາງການຈັດຕັ້ງປະຕິບັດກິດຈະກໍານີ້ອອກໄປຍັງໂຮງ ຮຽນອື່ນໆ ຕາມທີ່ມີເງື່ອນໄຂງົບປະມານ.

# ນະວັດຕະກຳໃໝ່ຂອງການສຶກສາຂັ້ນບ້ານ: ການສະໜັບສະໜູນນັກຮຽນ, ຄອບຄົວຂອງພວກເຂົາ ແລະ ຄູໃນການນຳໃຊ້ຄະນິດສາດ ເພື່ອປັບປຸງຊີວິດການເປັນຢູ່ທີ່ດີຂຶ້ນໃນເຂດຊົນນະບົດ

ອົງການບ້ານຈຸດສຸມສາກົນ

ເມືອງເລົ່າງາມ

21 ເດືອນ

ກີບ 980,294,400



## ສິ່ງທ້າທາຍທີ່ຕ້ອງໄດ້ແກ້ໄຂ

- ຜູ້ປົກຄອງໃນຊຸມຊົນຊົນເຜົ່າບໍ່ເຫັນຄຸນຄ່າຂອງໃນການສົ່ງລູກຫຼານຂອງເຂົາເຈົ້າໄປໂຮງຮຽນ ໂດຍສະເພາະແມ່ນເດັກນ້ອຍຍິງ
- ຄູຂາດການຝຶກອົບຮົມ ແລະ ການສະໜັບສະໜູນ ເພື່ອເຮັດໃຫ້ຫຼັກສູດສອດຄ່ອງກັບການດຳລົງຊີວິດປະຈຳວັນຂອງຊຸມຊົນ
- ເດັກນ້ອຍ ໂດຍສະເພາະແມ່ນເດັກນ້ອຍຜູ້ຍິງບໍ່ໄດ້ເຂົ້າໂຮງຮຽນປົກກະຕິ ແລະ ອັດຕາປະລະການຮຽນແມ່ນສູງ.

## ເປົ້າໝາຍ

- ເພີ່ມອັດຕາການເຂົ້າຮຽນ ແລະ ລຸດຜ່ອນອັດຕາການປະລະການຮຽນ ໂດຍສະເພາະແມ່ນເດັກຍິງ.

## ຈຸດປະສົງ

- ສ້າງຫຼັກສູດທົດລອງທີ່ເຊື່ອມໂຍງກັບວິຊາຄະນິດສາດ ແລະ ກະສິກຳຂອງໝູ່ບ້ານ ເພື່ອເຮັດໃຫ້ໂຮງຮຽນ ມີຄວາມກ່ຽວໂຍງກັບເດັກນ້ອຍ ແລະ ຄອບຄົວຂອງພວກເຂົາ
- ສົ່ງເສີມການຮ່ວມມືລະຫວ່າງໂຮງຮຽນ ແລະ ຊຸມຊົນເພື່ອສ້າງຄວາມເຂັ້ມແຂງໃຫ້ຄອບຄົວສະໜັບສະໜູນການສຶກສາ ໂດຍສະເພາະສຳລັບເດັກຍິງ
- ການສ້າງຄວາມອາດສາມາດ ແລະ ສົ່ງເສີມຄູນຳໃຊ້ເຕັກນິກການຮຽນທີ່ເນັ້ນການປະຕິບັດຕົວຈິງ.





## ນະວັດຕະກໍາ

- ແນະນໍາວິທີການສອນແບບໃໝ່ໃນການສອນເລກ ເພື່ອໃຫ້ຫຼັກສູດເຊື່ອມໂຍງກັບກະສິກໍາ ແລະ ເນັ້ນໃສ່ການສົ່ງເສີມ ແລະ ມີສ່ວນຮ່ວມຂອງເດັກຍິງ
- ສ້າງຫຼັກສູດພາກປະຕິບັດສໍາລັບນັກຮຽນ, ໂດຍສະເພາະເດັກຍິງ ເພື່ອນໍາໃຊ້ຄວາມຮູ້ຂອງພວກເຂົາໃນຊີວິດປະຈໍາວັນໃນທາງທີ່ຊ່ວຍຄອບຄົວຂອງພວກເຂົາ.

## ຜົນໄດ້ຮັບ

- ຄູສອນ 28 ທ່ານ (ເປັນຍິງ 22 ທ່ານ) ແລະ ຜູ້ອໍານວຍການໂຮງຮຽນ 9 ທ່ານ (ເປັນຍິງ 4 ທ່ານ) ໃນ 10 ໂຮງຮຽນເປົ້າໝາຍໄດ້ສ້າງແຜນການສອນວິຊາຄະນິດສາດແບບໃໝ່ ສໍາລັບຂັ້ນ ປ 3-4 ໂດຍອີງໃສ່ຫຼັກສູດແຫ່ງຊາດ
- ຄູໄດ້ພັດທະນາທັກສະ ແລະ ຄວາມໝັ້ນໃຈໃນການນໍາໃຊ້ເຕັກນິກການຮຽນທີ່ເນັ້ນການປະຕິບັດຕົວຈິງ ແລະ ນໍາໃຊ້ຕົວຢ່າງຈາກກະສິກໍາ ແລະ ການຕະຫຼາດເພື່ອໃຫ້ວິຊາຄະນິດສາດມີຄວາມກ່ຽວໂຍງ
- ການຮຽນແບບເພື່ອນຊ່ວຍເພື່ອນ ແລະ ການສ້າງຄວາມອາດສາມາດ ລະຫວ່າງ ຄູ ເພື່ອແລກປ່ຽນວິທີ ແລະ ສື່ການຮຽນ
- ສົ່ງເສີມໃຫ້ຄອບຄົວ ແລະ ຊຸມຊົນສະໜັບສະໜູນການສຶກສາ ແລະ ຄວາມສໍາຄັນຂອງວິຊາ STEM ສໍາລັບເດັກຍິງ
- ມີການສະໜັບສະໜູນທີ່ເຂັ້ມແຂງຈາກຫ້ອງການສຶກສາທິການ ແລະ ກິລາ ເມືອງເລົ່າງາມ ທີ່ຊ່ວຍໂອ້ລົມນໍາຄູ ແລະ ຜູ້ອໍານວຍການ ແລະ ສົ່ງເສີມໃຫ້ຊຸມຊົນມີສ່ວນຮ່ວມ
- ເພີ່ມຈໍານວນການເຂົ້າຮຽນເປັນປົກກະຕິສໍາລັບນັກຮຽນ ແລະ ບໍ່ມີການຢຸດຕິການຮຽນໃນຊ່ວງນໍາໃຊ້ເງິນຊ່ວຍເຫຼືອ.

## ແຜນຕໍ່ໜ້າ

- ຫ້ອງການສຶກສາທິການ ແລະ ກິລາ ເມືອງເລົ່າງາມ ມີຄວາມສົນໃຈຂະຫຍາຍເວລາການຝຶກອົບຮົມ ແລະ ວິທີການສອນໄປຍັງ ໂຮງຮຽນແຫ່ງອື່ນໆພາຍໃນເມືອງ
- ອົງການບ້ານຈຸດສຸມ (Village Focus International) ກໍາລັງລະດົມທຶນເພື່ອດໍາເນີນກິດຈະກໍາ ແລະ ຂະຫຍາຍໂຄງການ.

# ໂຄງການປັບປຸງຄຸນນະພາບການສອນວິຊາເລກ ໃຫ້ແກ່ຄູສອນຊັ້ນປະຖົມ ຢູ່ທີ່ວິທະຍາໄລຄູຄັງໄຂ

ວິທະຍາໄລ ຄັງໄຂ

ວິທະຍາໄລຄູຄັງໄຂ, ແຂວງຊຽງຂວາງ

34 ເດືອນ

ກີບ 369,955,000



## ສິ່ງທ້າທາຍທີ່ຕ້ອງໄດ້ແກ້ໄຂ

- ການສອນວິຊາຄະນິດສາດໃນສາຍສ້າງຄູປະຖົມສ່ວນຫຼາຍແມ່ນເນັ້ນໃສ່ແຕ່ທິດສະດີ ແລະ ຄູເປັນໃຈກາງການຮຽນການສອນ
- ປຶ້ມຄູ່ມືການສອນຄະນິດສາດ ແລະ ສື່ການຮຽນການສອນບໍ່ໄດ້ສະໜັບສະໜູນພັດທະນາວິທີຄິດຂອງນັກສຶກສາຄູທາງດ້ານການຄົ້ນຄິດແບບວິເຄາະ ແລະ ທັກສະໄຈ້ແຍກວິໄຈ ເພື່ອສອນວິຊາຄະນິດສາດໃຫ້ໄດ້ຮັບໝາກຜົນ
- ນັກສຶກສາຄູທີ່ຈົບໃໝ່ຈາກວິທະຍາໄລສ້າງຄູບໍ່ມີຄວາມໝັ້ນໃຈພໍໃນການສອນວິຊາຄະນິດສາດໃນໄລຍະຕົ້ນຂອງການສອນ.

## ເປົ້າໝາຍ

- ປັບປຸງຄຸນນະພາບການສອນວິຊາຄະນິດສາດໃນໂຮງຮຽນປະຖົມ.

## ຈຸດປະສົງ

- ເພື່ອພັດທະນາຄູ່ມືແນະນຳວິທີສິດສອນ ແລະ ອຸປະກອນຮັບໃຊ້ການສອນຄະນິດສາດ ສຳລັບໃນສາຍສ້າງຄູ
- ເພື່ອປັບປຸງທັກສະນັກສຶກສາຄູ ໃນການຕັ້ງຄຳຖາມ, ການຍົກຕົວຢ່າງ, ການອອກແບບກິດຈະກຳ, ແລະ ການຜະລິດອຸປະກອນເຂົ້າໃນການສອນ
- ສ້າງຄວາມໝັ້ນໃຈ ໃຫ້ແກ່ນັກສຶກສາຄູ ດ້ວຍການນຳໃຊ້ຄວາມຮູ້ ແລະ ທັກສະໃໝ່ຈາກປະສົບການການສອນໃນໂຮງຮຽນທີ່ລົງໄປຝຶກຫັດ.

## ນະວັດຕະກຳ

- ແນວທາງການປັບປຸງການສອນແບບໃໝ່ ແລະ ການຜະລິດສື່ການຮຽນການສອນໄດ້ຊ່ວຍເພີ່ມທັກສະໃນການສອນໄດ້ຢ່າງມີປະສິດທິພາບສຳລັບນັກສຶກສາຄູສອນສາຍປະຖົມໃນການຕັ້ງຄຳຖາມ, ການໃຫ້ຕົວຢ່າງ ແລະ ການຜະລິດສື່ການຮຽນການສອນ ທີ່ກ່ຽວຂ້ອງກັບເນື້ອໃນຫຼັກສູດຂອງສາຍສ້າງຄູປະຖົມ.







## ຜົນໄດ້ຮັບ

- ອາຈານສອນໃນວິທະຍາໄລສ້າງຄູ ມີຄວາມຮູ້ທີ່ໜັກແໜ້ນ ແລະ ມີປະສົບການເພີ່ມຂຶ້ນໃນການປັບປຸງປື້ມຄູ່ມືຄູ ແລະ ສື່ການສອນ
- ນັກສຶກສາຄູສາຍປະຖົມສາມາດພັດທະນາການແຕ່ງບົດສອນໄດ້ຢ່າງສ້າງສັນ ທີ່ປະກອບມີກິດຈະກຳ ແລະ ຕົວຢ່າງທີ່ສາມາດປະຕິບັດຕົວຈິງໄດ້ ເຊິ່ງໄດ້ເຮັດໃຫ້ນັກຮຽນປະຖົມມີຄວາມຫ້າວຫັນ ແລະ ມ່ວນຊື່ນໃນການຮຽນຄະນິດສາດ
- ໄດ້ຈັດພິມປື້ມຄູ່ມືຄູເສີມ ໃນການສອນວິຊາຄະນິດສາດສຳລັບ ຂັ້ນ ປ.4 ຈຳນວນ 500 ຫົວ ແລະ ສຳລັບ ຂັ້ນ ປ.5 ຈຳນວນ 500 ຫົວ ເພື່ອການແຈກຢາຍໃຫ້ແກ່ໂຮງຮຽນເປົ້າໝາຍ.

## ແຜນຕໍ່ໜ້າ

- ຈະເຜີຍແຜ່ຜົນງານການປະຕິບັດໂຄງການນີ້ໃຫ້ແກ່ບັນດາຄູອາຈານ ແລະ ພາກສ່ວນທີ່ກ່ຽວຂ້ອງໄດ້ຮັບຮູ້ ແລະ ນຳເອົາຜົນງານດັ່ງກ່າວໄປຈັດຕັ້ງປະຕິບັດໃນໂຮງຮຽນ ໃນກອງປະຊຸມສິ້ນປີຮຽນຂອງວິທະຍາໄລຄູ ຄັງໄຂ ແລະ ກອງປະຊຸມແລກປ່ຽນບົດຮຽນລະຫວ່າງ ວິທະຍາໄລສ້າງຄູ ຄັງໄຂ ກັບພະແນກສຶກສາທິການ ແລະ ກິລາ ແຂວງຊຽງຂວາງ ແລະ ແຂວງຫົວພັນ.
- ປື້ມຄູ່ມືນີ້ຈະຖືກແຊກຊ້ອນສອນເຂົ້າກັບວິທີສອນຄະນິດສາດ ໃຫ້ແກ່ນັກສຶກສາຄູທີ່ຍັງຮຽນໃນວິທະຍາໄລສ້າງຄູ
- ແຈກຢາຍປື້ມຄູ່ມືເສີມໃນການສອນວິຊາຄະນິດສາດໃຫ້ແກ່ໂຮງຮຽນເປົ້າໝາຍ
- ສືບຕໍ່ໃຫ້ການຊ່ວຍເຫຼືອ, ການຕິດຕາມຊຸກຍູ້ ແລະ ການປະເມີນການນຳໃຊ້ປື້ມຄູ່ມື.

# ໂຄງການປັບປຸງການຈັດການຮຽນ-ການສອນວິຊາພາສາລາວ ຫ້ອງຄວບ 2 ຂັ້ນຮຽນ ປ.2 ແລະ ປ.3

ພະແນກສຶກສາທິການ ແລະ ກິລາ ແຂວງຊຽງຂວາງ

ເມືອງຄູນ, ແຂວງຊຽງຂວາງ

20 ເດືອນ

ກີບ 189,932,000



## ສິ່ງທ້າທາຍທີ່ຕ້ອງໄດ້ແກ້ໄຂ

- ຄູຂາດທັກສະໃນການຈັດກິດຈະກຳການຮຽນການສອນຫ້ອງຄວບ ແລະ ບໍ່ຮູ້ແຕ່ງບົດສອນຫ້ອງຄວບໂດຍສະເພາະ ວິຊາພາສາລາວ
- ການຈັດສະພາບແວດລ້ອມໃນຫ້ອງຮຽນຄວບ ທີ່ຍັງບໍ່ທັນໄດ້ດີ ແລະ ມີຄວາມຫຍຸ້ງຍາກໃນການຈັດຫ້ອງຄວບ
- ຄຸນນະພາບການຮຽນວິຊາພາສາລາວຂອງນັກຮຽນໃນຫ້ອງຄວບຍັງຕ່ຳ.

## ເປົ້າໝາຍ

- ສົ່ງເສີມການຮຽນຮູ້ພາສາລາວຂັ້ນ ປ໋2 - ປ໋3 ສຳລັບນັກຮຽນທີ່ຢູ່ໃນຫ້ອງຄວບ.

## ຈຸດປະສົງ

- ເສີມສ້າງຄວາມຮູ້ ແລະ ທັກສະຂອງຄູ ໃຫ້ມີຄວາມເຂົ້າໃຈວິທີສອນຫ້ອງຄວບ ແລະ ສາມາດຈັດສະພາບແວດລ້ອມການສອນຫ້ອງຄວບ
- ສ້າງທັກສະ ແລະ ຄວາມຮູ້ໃຫ້ໃຫ້ແກ່ຄູໃນການຈັດກິດຈະກຳການຮຽນການສອນວິຊາພາສາລາວໃນຫ້ອງຄວບໃຫ້ດີຂຶ້ນ
- ເພື່ອປັບປຸງຜົນການຮຽນຂອງນັກຮຽນຫ້ອງຄວບໃນໂຮງຮຽນເປົ້າໝາຍໃຫ້ມີຜົນການຮຽນວິຊາພາສາລາວດີຂຶ້ນ.

## ນະວັດຕະກຳ

- ໄດ້ພັດທະນາ ແລະ ຈັດຕັ້ງປະຕິບັດແນວທາງໃໝ່ໃນການສອນພາສາລາວໃນຫ້ອງຄວບ.








## ຜົນໄດ້ຮັບ

- ການປະເມີນຜົນງານການສອນຫ້ອງຄວບຂອງຄູ ໃນຕອນຕົ້ນຂອງໂຄງການ ແມ່ນຢູ່ໃນເກນດີ ທີ່ 32% ແລະ ໄດ້ມີການເພີ່ມຂຶ້ນເປັນ 93% ພາຍຫຼັງການຈັດຕັ້ງປະຕິບັດໂຄງການ
- ນັກຮຽນເສັງຜ່ານການວັດປະເມີນການອ່ານ ແລະ ການຂຽນພາສາລາວ ໃນຕອນຕົ້ນຂອງໂຄງການ ຢູ່ທີ່ 69% ແລະ ໄດ້ເພີ່ມຂຶ້ນເປັນ 78% ພາຍຫຼັງການຈັດຕັ້ງປະຕິບັດໂຄງການ
- ໂຄງການນີ້ໄດ້ນໍາສະເໜີວິທີການແຕ່ງບົດສອນ-ແຜນການສອນ, ເທັກນິກວິທີສອນ, ການຄຸ້ມຄອງ ແລະ ການຈັດສະພາບແວດລ້ອມການສອນຫ້ອງຄວບ ແມ່ນມີປະສິດທີ່ພາບຫຼາຍ ເຊິ່ງໄດ້ເຮັດໃຫ້ຫຼາຍໂຮງຮຽນນໍາໃຊ້ວິທີການດັ່ງກ່າວປະກອບເຂົ້າໃນການຈັດການສອນໃນຫ້ອງດຽວນໍາ
- ມີນັກຮຽນຊົນເຜົ່າຄົນໜຶ່ງ ຈາກໂຮງຮຽນປະຖົມສົມບູນສຶກສາແກ່ວກວ້າງ, ເມືອງຄູນ, ແຂວງຊຽງຂວາງ ໜຶ່ງໃນໂຮງຮຽນເປົ້າໝາຍໄດ້ຊະນະການສອບເສັງນັກຮຽນເກັ່ງປະຈໍາເມືອງ ໃນສົກຮຽນ 2018-2019.

## ແຜນຕໍ່ໜ້າ

- ຫ້ອງການສຶກສາທິການ ແລະ ກິລາ ເມືອງຄູນ ມີແຜນຜັນຂະຫຍາຍແນວທາງການຈັດຕັ້ງປະຕິບັດກິດຈະກໍານີ້ອອກໄປຍັງໂຮງຮຽນອື່ນໆ ອີງຕາມເງື່ອນໄຂງົບປະມານຂອງຕົນ.

# ໂຄງການປັບປຸງ ແລະ ຍົກສູງ 4 ທັກສະການສອນວິຊາພາສາ ລາວ ແລະ ວິທີການສອນຫ້ອງຄວບຊັ້ນປະຖົມສຶກສາ

ພະແນກສຶກສາທິການ ແລະ ກິລາ ແຂວງຜົ້ງສາລີ

ເມືອງຜົ້ງສາລີ ແລະ ເມືອງໃໝ່ ແຂວງຜົ້ງສາລີ

21 ເດືອນ

ກີບ 413,016,500



## ສິ່ງທ້າທາຍທີ່ຕ້ອງໄດ້ແກ້ໄຂ

- ຄູສອນສ່ວນຫຼາຍມັກສອນຕາມຕຳລາຈັບປື້ມຕຳລາຂຶ້ນຫ້ອງສອນ ແລະ ມີໂອກາດຈຳກັດໃນການພັດທະນາວິຊາຊີບຂອງຕົນ. ຄູສອນຫ້ອງຄວບບໍ່ມີແຜນບົດສອນ ແລະ ບໍ່ມີຄູ່ມືການສອນຫ້ອງຄວບທີ່ຊັດເຈນ ເພື່ອໃຊ້ໃນການສອນ ແລະ ມັກພົບອຸປະສັກຕໍ່ການຈັດການຮຽນການສອນ ແລະ ການສຶກສາຮຽນຮ່ວມໃນລະບົບຫ້ອງຄວບ.

## ເປົ້າໝາຍ

- ຜົນການຮຽນການສອນໃນໂຮງຮຽນ ທີ່ຢູ່ເຂດຫ່າງໄກສອກຫຼີກ ໂດຍສະເພາະແມ່ນ ການສອນພາສາລາວ ໄດ້ມີການປັບປຸງໃຫ້ດີຂຶ້ນ.

## ຈຸດປະສົງ

- ສ້າງຄວາມຮູ້ ແລະ ເຂົ້າໃຈໃຫ້ແກ່ຄູຝຶກຫຼັກແຫຼ່ງໃນຂັ້ນແຂວງ, ຂັ້ນເມືອງ ກ່ຽວກັບປື້ມຄູ່ມືແນະນຳການສອນຫ້ອງຄວບຂອງກະຊວງສຶກສາທິການ ແລະ ກິລາ ສະບັບປີ 2015 ເພື່ອສາມາດນຳໄປຝຶກອົບຮົມໃຫ້ຄູສອນໄດ້
- ຍົກລະດັບຄວາມອາດສາມາດຂອງຄູສອນທັງ 4 ທັກສະການສອນພາສາລາວ, ແຜນບົດສອນຫ້ອງຄວບ ແລະ ການຄຸ້ມຄອງຫ້ອງຄວບ ຜ່ານການຈັດການຝຶກອົບຮົມ ແລະ ການຕິດຕາມຊຸກຍູ້ໃນກຸ່ມໂຮງຮຽນ
- ເພີ່ມການສະໜອງທາງດ້ານສື່ການຮຽນການສອນເພີ່ມ ໃຫ້ຫໍສະໝຸດຂອງໂຮງຮຽນເປົ້າໝາຍ ເພື່ອສົ່ງເສີມການຈັດຕັ້ງປະຕິບັດແນວທາງການສອນຫ້ອງຄວບແບບໃໝ່.







## ນະວັດຕະກຳ

- ພັດທະນາ ແລະ ຈັດການຝຶກອົບຮົມການສອນຫ້ອງຄວບ ອີງຕາມຄູ່ມືການສອນຫ້ອງຄວບຂອງກະຊວງສຶກສາທິການ ແລະ ກິລາ
- ນຳໃຊ້ລະບົບກຸ່ມໂຮງຮຽນເປັນຕົວຂັບເຄື່ອນໃນການໃຫ້ການສະໜັບສະໜູນການສອນ.

## ຜົນໄດ້ຮັບ

- ຄູສອນມີຄວາມເຂົ້າໃຈເລິກເຊິ່ງ ແລະ ມີຄວາມໝັ້ນໃຈຫຼາຍຂຶ້ນ ຕໍ່ການສ້າງແຜນການສອນຫ້ອງຄວບ ແລະ ການຄຸ້ມຄອງການສອນເຊິ່ງເຮັດໃຫ້ການຮຽນການສອນມີຄວາມຫ້າວຫັນຂຶ້ນ
- ນັກຮຽນມີຄວາມສາມາດຫຼາຍຂຶ້ນໃນການເວົ້າ, ການຟັງ, ການອ່ານ ແລະ ການຂຽນພາສາລາວ
- ຄູສອນມີຄວາມຄິດສ້າງສັນໃນການຜະລິດສື່ການຮຽນການສອນຈາກການໝູນໃຊ້ວັດຖຸທີ່ມີໃນທ້ອງຖິ່ນ
- ສ້າງເຄື່ອງມືວັດ ແລະ ປະເມີນຜົນໂຮງຮຽນທີ່ມີຫ້ອງຄວບ ເພື່ອໃຫ້ທາງຫ້ອງການສຶກສາທິການ ແລະ ກິລາເມືອງ ໄດ້ໃຊ້ໃນການຕິດຕາມຄວາມຄືບໜ້າ ແລະ ການໃຫ້ການຊ່ວຍເຫຼືອສະໜັບສະໜູນ.

## ແຜນຕໍ່ໜ້າ

- ພະແນກສຶກສາທິການ ແລະ ກິລາແຂວງ ໄດ້ມີແຜນໃນການຜັນຂະຫຍາຍການຈັດຕັ້ງປະຕິບັດກິດຈະກຳນີ້ອອກໄປຍັງເມືອງອື່ນໆ ຢູ່ພາຍໃນແຂວງ.

# ໂຄງການປັບປຸງຄຸນນະພາບການສຶກສາ ໂດຍນຳໃຊ້ການສຶກສາການສອນ "LESSON STUDY" ໃຫ້ຄູຊັ້ນປະຖົມສຶກສາ

ຫ້ອງການສຶກສາທິການ ແລະ ກິລາ ເມືອງຮຸນ

ເມືອງຮຸນ, ແຂວງອຸດົມໄຊ

21 ເດືອນ

ກີບ 559,185,000



## ສິ່ງທ້າທາຍທີ່ຕ້ອງໄດ້ແກ້ໄຂ

- ຜົນການຮຽນວິຊາຄະນິດສາດ ແລະ ພາສາລາວ ຂອງນັກຮຽນຊັ້ນປະຖົມ ໂດຍສະເພາະແມ່ນນັກຮຽນຊົນເຜົ່າ ແລະ ເດັກພິການ ຍັງບໍ່ໄດ້ຕາມມາດຖານຂັ້ນພື້ນຖານ
- ຄູສອນສ່ວນຫຼາຍມັກສອນ ແລະ ເຮັດວຽກແບບໂດດດ່ຽວ, ການຊອກຫາຄວາມຮູ້ມາພັດທະນາວິຊາຊີບຕົນຍັງຈຳກັດ ແລະ ການຮຽນແບບເພື່ອນສອນເພື່ອນຍັງຈຳກັດ ເຊິ່ງເປັນການຈຳກັດໂອກາດໃນການພັດທະນາທັກສະການຮຽນການສອນ.

## ເປົ້າໝາຍ

- ເສີມສ້າງທັກສະຂອງຜູ້ອຳນວຍການໂຮງຮຽນ ແລະ ຄູສອນ ຜ່ານຂະບວນການຈັດການຮຽນການສອນແບບເພື່ອນສອນເພື່ອນ ໃນການສອນວິຊາພາສາລາວ ແລະ ຄະນິດສາດ, ພ້ອມດຽວກັບການນຳໃຊ້ສື່ການຮຽນການສອນ ແລະ ມູມການຮຽນຮູ້ໃນຫ້ອງຮຽນ.

## ຈຸດປະສົງ

- ເຮັດໃຫ້ນັກຮຽນໂດຍສະເພາະນັກຮຽນຍິງ ແລະ ນັກຮຽນພິການໃຫ້ສາມາດເວົ້າ ແລະ ຂຽນໄດ້ພ້ອມທັງມີທັກສະໃນການຄິດໄລ່
- ກະຕຸ້ນຊຸກຍູ້ຄູໃນການຄົ້ນຄ້ວາການສອນ ແລະ ການຮຽນຮູ້ດ້ວຍຕົນເອງ ແລະ ຮຽນຮູ້ຈາກເພື່ອນເພື່ອປັບປຸງການແຕ່ງບົດສອນ, ການຜະລິດສື່ການຮຽນການສອນ ແລະ ດຳເນີນການສອນ
- ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ອຳນວຍການໂຮງຮຽນ ໃນການຊີ້ນຳ ແລະ ນຳພາຄູ, ການສອນສາທິດ ແລະ ການນຳພາກິດຈະກຳການຮຽນແບບເພື່ອນສອນເພື່ອນ.

## ນະວັດຕະກຳ

- ໄດ້ແນະນຳຮູບແບບການສຶກສາການສອນເພື່ອສືບຕໍ່ພັດທະນາວິຊາຊີບສຳລັບຄູຊັ້ນປະຖົມສຶກສາໃນເຂດໂຮງຮຽນຫ່າງໄກສອກຫຼີກ.









## ຜົນໄດ້ຮັບ

- ຄູສອນໃນໂຮງຮຽນ 50 ແຫ່ງ ໄດ້ນຳໃຊ້ການສອນຮູບແບບເພື່ອນສອນເພື່ອນໃນການຂຶ້ນຫ້ອງສອນເປັນປະຈຳ ພ້ອມດຽວກັບໄດ້ເຜີຍແຜ່ການສຶກສາການສອນນີ້ອອກໄປທົ່ວໂຮງຮຽນ 140 ແຫ່ງພາຍໃນເມືອງ
- ໄດ້ຈັດຕັ້ງຄູຝຶກຂັ້ນໂຮງຮຽນ ເພື່ອເປັນການຝຶກອົບຮົມ ແລະ ຖອດຖອນ, ແນະນຳການຈັດຕັ້ງການສອນຮ່ວມກັນ
- ຜົນການຮຽນວິຊາພາສາລາວ ຂອງນັກຮຽນໄດ້ມີການປັບປຸງຂຶ້ນອີກ 38% ເມື່ອທຽບໃສ່ກັບການປະເມີນຕົ້ນໂຄງການ.

## ແຜນຕໍ່ໜ້າ

- ຈະສືບຕໍ່ດຳເນີນແນວທາງການຈັດຕັ້ງປະຕິບັດນີ້ອອກໄປຕື່ມ ໂດຍການນຳໃຊ້ງົບປະມານບໍລິຫານຂອງໂຮງຮຽນ (SBGs)
- ຫ້ອງການສຶກສາທິການ ແລະ ກິລາ ເມືອງຮຸນ ຈະບັນຈຸການສຶກສາການສອນນີ້ເຂົ້າເປັນກິດຈະກຳຂອງຄູສຶກສານິເທດ ເພື່ອລົງຕິດຕາມຊຸກຍູ້ ແລະ ເຜີຍແຜ່ໃນກຸ່ມໂຮງຮຽນ.

# ໂຄງການປັບປຸງຄວາມຊຳນານງານໃນລາຍວິຊາຂອງຄູສອນຊັ້ນປະຖົມ

ຫ້ອງການສຶກສາທິການ ແລະ ກິລາ ເມືອງນາໝໍ້

ເມືອງນາໝໍ້, ແຂວງອຸດົມໄຊ

22 ເດືອນ

ກີບ 659,413,000

## ສິ່ງທ້າທາຍທີ່ຕ້ອງໄດ້ແກ້ໄຂ

- ຈາກຜົນປະເມີນເບື້ອງຕົ້ນ ໃນປີ 2016 ໄດ້ສະແດງໃຫ້ເຫັນເຖິງຜົນການຮຽນແມ່ນຢູ່ໃນລະດັບຕ່ຳ, ນັກຮຽນໃນຊັ້ນຖົມ ປ.4 ແລະ ປ.5 ຈຳນວນ 14% ບໍ່ສາມາດອ່ານໜັງສືໄດ້
- ຄູສອນພາສາລາວ ແລະ ຄະນິດສາດ ຍັງຂາດທັກສະ ເພື່ອຮັບປະກັນນັກຮຽນທັງໝົດໃນການບັນລຸຄວາມສາມາດໃນການອ່ານການຂຽນ ແລະ ການຄິດໄລ່ເລກ.

## ເປົ້າໝາຍ

- ມີການປັບປຸງທັກສະການສອນວິຊາພາສາລາວ ແລະ ຄະນິດສາດ ຂອງຄູຊັ້ນປະຖົມດ້ວຍການກໍ່ສ້າງຄູຊຳນານງານສະເພາະວິຊາ.

## ຈຸດປະສົງ

- ເພື່ອປັບປຸງທັກສະການສອນຄູຊຳນານງານສະເພາະວິຊາພາສາລາວ ແລະ ວິຊາຄະນິດສາດ
- ເພື່ອຊຸກຍູ້ຄູຊຳນານງານສະເພາະວິຊາ ເພື່ອເສີມສ້າງທັກສະໃຫ້ແກ່ຄູສອນຜູ້ອື່ນ ໂດຍຜ່ານຂະບວນການເພື່ອນສອນເພື່ອນ
- ເພື່ອສ້າງຂີດຄວາມສາມາດໃຫ້ແກ່ຄູສຶກສານິເທດ, ວິຊາການສຶກສາເມືອງ, ຜູ້ບໍລິຫານໂຮງຮຽນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ ເພື່ອປັບປຸງຄຸນນະພາບການຮຽນການສອນ.

## ນະວັດຕະກຳ

- ກຳນົດເຫັນໄດ້ ແລະ ມີການຝຶກອົບຮົມຄູຊຳນານງານສະເພາະວິຊາພາສາລາວ ແລະ ວິຊາຄະນິດສາດ ເພື່ອຈະໄດ້ໃຫ້ການຊ່ວຍເຫຼືອແກ່ຄູສອນຜູ້ອື່ນ ເພື່ອປັບປຸງຄຸນນະພາບການສອນ.





## ຜົນໄດ້ຮັບ

- ການຈັດການຮຽນການສອນຂອງຄູໃນ 15 ໂຮງຮຽນເປົ້າໝາຍ ແມ່ນຮັບການປັບປຸງດີຂຶ້ນ ເຊິ່ງນຳໄປສູ່ການຮຽນຂອງນັກຮຽນມີຜົນດີຂຶ້ນ
- ໃນໄລຍະຕົ້ນຂອງໂຄງການ ຜົນການປະເມີນການຮຽນວິຊາພາສາລາວຂອງນັກຮຽນ ນັກຮຽນເສັງຜ່ານມີ 34%, ພາຍຫຼັງການຈັດຕັ້ງໂຄງການ ນັກຮຽນເສັງຜ່ານເພີ່ມຂຶ້ນເປັນ 77%
- ສຳລັບວິຊາຄະນິດສາດ ຕອນຕົ້ນຂອງໂຄງການ ນັກຮຽນເສັງຜ່ານມີ 51%, ພາຍຫຼັງການຈັດຕັ້ງໂຄງການນັກຮຽນໄດ້ເສັງຜ່ານເພີ່ມຂຶ້ນເປັນ 74%.

## ແຜນຕໍ່ໜ້າ

- ຫ້ອງການສຶກສາທິການ ແລະ ກິລາ ເມືອງນາໝໍ້ ມີແຜນຜັນຂະຫຍາຍແນວທາງການຈັດຕັ້ງປະຕິບັດກິດຈະກຳນີ້ ອອກໄປໃຫ້ທົ່ວເມືອງ ໂດຍເນັ້ນໃສ່ການສຶກສາໃຫ້ແທດເໝາະກັບສະພາບຂອງທ້ອງຖິ່ນ.

# ໂຄງການຍົກລະດັບຄຸນນະພາບໃນການຈັດຕັ້ງປະຕິບັດ 3 ຂໍ້ແຂ່ງຂັນ ຂອງຂະແໜງການສຶກສາ

ຫ້ອງການສຶກສາທິການ ແລະ ກິລາ ເມືອງສິງ

ເມືອງສິງ, ແຂວງຫຼວງນໍ້າທາ

23 ເດືອນ

ກີບ 400,000,000

## ສິ່ງທ້າທາຍທີ່ຕ້ອງໄດ້ແກ້ໄຂ

- ຄຸນນະພາບຂອງການສຶກສາຍັງຕໍ່າ ເນື່ອງຈາກການປະເມີນຜົນງານຄູ ທີ່ບໍ່ທັນແທດເໝາະກັບຜົນສໍາເລັດຕົວຈິງໃນການເຮັດວຽກ ແລະ ການຄຸ້ມຄອງປະຕິບັດວຽກການສຶກສາ
- ການມີສ່ວນຮ່ວມຕໍ່ກັບໂຮງຮຽນຂອງຊຸມຊົນ ໃນການປະກອບສ່ວນພັດທະນາຍັງບໍ່ສູງ.

## ເປົ້າໝາຍ

- ປັບປຸງການສ້າງແຜນ ແລະ ຄຸ້ມຄອງບໍລິຫານການພັດທະນາໂຮງຮຽນ ແລະ ການປະຕິບັດໜ້າທີ່ສິດສອນຂອງຄູ.

## ຈຸດປະສົງ

- ເພື່ອປັບປຸງຄຸນນະພາບການສອນ ໂດຍນໍາໃຊ້ 3 ຂໍ້ແຂ່ງຂັນຂອງຂະແໜງການສຶກສາ ເປັນຂອບເຂດການປະເມີນ ແລະ ຄຸ້ມຄອງການປະຕິບັດໜ້າທີ່ຂອງຄູ
- ຍົກລະດັບການປະເມີນ ແລະ ການຄຸ້ມຄອງການປະຕິບັດໜ້າທີ່ຂອງຜູ້ອໍານວຍການໂຮງຮຽນ
- ການຍົກລະດັບຄວາມຮັບຜິດຊອບຂອງຄູ ໃນການຕ້ານ ແລະ ສະກັດກັ້ນບັນຫາປະກົດການຫຍໍ້ທໍ້ໃນຂະແໜງການສຶກສາ
- ຍົກລະດັບຄວາມຮັບຜິດຊອບຂອງຄູຕໍ່ບັນຫາສະພາບແວດລ້ອມຂອງການສຶກສາ.

## ນະວັດຕະກໍາ

- ຜັນຂະຫຍາຍນະໂຍບາຍແຫ່ງຊາດເຂົ້າໃນການປະຕິບັດວຽກຕົວຈິງ ແລະ ຂະບວນການປະເມີນຜົນງານການເຮັດວຽກຂອງຄູ ແລະ ໂຮງຮຽນ, ການຄຸ້ມຄອງບໍລິຫານ ແລະ ການສ້າງແຮງຈູງໃຈສໍາລັບການຮຽນການສອນ.



## ຜົນໄດ້ຮັບ

- ໄດ້ສ້າງເຄື່ອງມືໃນການປະເມີນຜົນງານການເຮັດວຽກຂອງຄູ ໂດຍອີງໃສ່ນະໂຍບາຍການຈັດຕັ້ງປະຕິບັດ 3 ຂໍ້ແຂ່ງຂັນຂອງຂະແໜງການສຶກສາ, ຄູສຶກສານິເທດ ແລະ ອຳນວຍການໂຮງຮຽນໄດ້ຮັບການຝຶກອົບຮົມໃນການຈັດຕັ້ງປະຕິບັດ
- ຂະບວນການລົງຕິດຕາມປະເມີນຜົນການເຮັດວຽກຂອງຄູ ແລະ ໂຮງຮຽນຢ່າງເປັນປະຈຳ ໄດ້ເຮັດໃຫ້ຫ້ອງການສຶກສາທິການ ແລະ ກິລາ ເມືອງສິງ ສາມາດກຳນົດໄດ້ຄູສອນ ແລະ ໂຮງຮຽນທີ່ຕ້ອງການສະໜັບສະໜູນເພີ່ມ ເພື່ອຊ່ວຍໃຫ້ການຕິດຕາມ ແລະ ການຝຶກອົບຮົມສາມາດບັນລຸໄດ້ຕາມເປົ້າໝາຍ
- ການສອນຂອງຄູໄດ້ຮັບການປັບປຸງດີຂຶ້ນໃນທົ່ວໂຮງຮຽນປະຖົມ 82 ແຫ່ງ ພາຍໃນເມືອງສິງ ເຊິ່ງໄດ້ເຮັດໃຫ້ຜົນການຮຽນຂອງນັກຮຽນດີຂຶ້ນ
- ນັກຮຽນສາມາດເສັງຜ່ານວິຊາຄະນິດສາດ ແລະ ວິຊາພາສາລາວ ໃນໄລຍະຕົ້ນຂອງໂຄງການມີພຽງ 31% ແລະ ໄດ້ເພີ່ມເປັນ 61% ໃນທ້າຍໂຄງການ
- ສະພາບແວດລ້ອມພາຍໃນໂຮງຮຽນໄດ້ຮັບການປັບປຸງໃຫ້ດີຂຶ້ນ ຈາກການເຮັດວຽກຮ່ວມກັນລະຫວ່າງນັກຮຽນ ແລະ ສະມາຄົມໂຮງຮຽນ
- ຫ້ອງການສຶກສາທິການ ແລະ ກິລາ ເມືອງສິງ ໄດ້ແຜ່ຂະຫຍາຍແນວທາງການສຶກສານີ້ອອກໄປໂຮງຮຽນ ອະນຸບານ ແລະ ໂຮງຮຽນຊັ້ນມັດທະຍົມສຶກສາ.

## ແຜນຕໍ່ໜ້າ

- ຫ້ອງການສຶກສາທິການ ແລະ ກິລາ ເມືອງສິງ ຈະສືບຕໍ່ນຳໃຊ້ເຄື່ອງມືວັດ ແລະ ປະເມີນຜົນການສອນຂອງຄູ ແລະ ການຊີ້ນຳນຳພາຂອງອຳນວຍການໂຮງຮຽນທີ່ຖືກສ້າງຂຶ້ນ ແລະ ປັບປຸງຕະຫຼອດໄລຍະຂອງການຈັດຕັ້ງປະຕິບັດໂຄງການ ເພື່ອຍົກສູງຄຸນນະພາບການຮຽນການສອນ ແລະ ການຄຸ້ມຄອງໂຮງຮຽນ
- ສືບຕໍ່ການຈັດການຝຶກອົບຮົມຄືນໃຫ້ແກ່ຄູທີ່ມີຜົນການສອນໃນເກນຕໍ່າກວ່າມາດຕະຖານໃນທ້າຍຂອງສົກຮຽນ
- ຈະສືບຕໍ່ດຳເນີນການປະເມີນຜົນການຮຽນຂອງນັກຮຽນ ເພື່ອຕິດຕາມການຄວາມຄືບໜ້າທາງດ້ານຄຸນນະພາບຂອງການສຶກສາພາຍໃນເມືອງ
- ພະແນກສຶກສາທິການ ແລະ ກິລາ ແຂວງຫຼວງນ້ຳທາ ໄດ້ວາງແຜນໃນການນຳໃຊ້ປື້ມຄູ່ມືເຫຼົ່ານີ້ ແລະ ເຄື່ອງມືໃນການປະເມີນການເຮັດວຽກຂອງຄູທີ່ສ້າງຂຶ້ນໂດຍ ຫ້ອງການສຶກສາທິການ ແລະ ກິລາ ເມືອງສິງ ໄປຍັງເມືອງອື່ນໆອີກ.

# ໂຄງການຍົກສູງປະສິດທິພາບໃນການວາງແຜນ, ການນຳພາ ແລະ ການຄຸ້ມຄອງບໍລິຫານໂຮງຮຽນ

ພະແນກສຶກສາທິການ ແລະ ກິລາແຂວງຊຽງຂວາງ

ທຸກເມືອງ ພາຍໃນ ແຂວງຊຽງຂວາງ

29 ເດືອນ

ກີບ 332,902,000

## ສິ່ງທ້າທາຍທີ່ຕ້ອງໄດ້ແກ້ໄຂ

- ຄຸນນະພາບຂອງການສຶກສາຍັງຢູ່ໃນລະດັບຕ່ຳ, ທັກສະໃນການວາງແຜນຍັງບໍ່ໄດ້ດີເທົ່າທີ່ຄວນ, ທັກສະດ້ານການຄຸ້ມຄອງ ແລະ ພາວະຄວາມເປັນຜູ້ນຳກໍຍັງຕ້ອງຮັບການຍົກລະດັບເພີ່ມຕື່ມ.

## ເປົ້າໝາຍ

- ປັບປຸງທັກສະໃນການວາງແຜນ, ການຄຸ້ມຄອງ ແລະ ລະບົບການຊ່ວຍເຫຼືອການຊີ້ນຳນຳພາດ້ານການພັດທະນາໂຮງຮຽນ.

## ຈຸດປະສົງ

- ເພື່ອປັບປຸງຄູ່ມືໃນການວາງແຜນ, ການຄຸ້ມຄອງ ແລະ ຄວາມເປັນຜູ້ນຳເພື່ອຮັບປະກັນຄວາມອາດສາມາດຂອງພວກເຂົາ ເພື່ອນຳໄປສູ່ຄຸນນະພາບການສຶກສາທີ່ດີຂຶ້ນ
- ເພື່ອສ້າງຂີດຄວາມສາມາດຂອງພະນັກງານໃນພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ຜູ້ອຳນວຍການໂຮງຮຽນໃນການວາງແຜນ, ການຄຸ້ມຄອງ ແລະ ຄວາມເປັນຜູ້ນຳ ໃນຂົງເຂດຄວາມຮັບຜິດຊອບຂອງຕົນ
- ແຜນຍຸດທະສາດ, ແຜນພັດທະນາໂຮງຮຽນ ແລະ ຈັດຕັ້ງປະຕິບັດກິດຈະກຳຢ່າງມີປະສິດທິພາບ
- ໂຮງຮຽນເປົ້າໝາຍທັງ 43 ແຫ່ງຈະກາຍເປັນໂຮງຮຽນໂຕແບບໃຫ້ແກ່ແຂວງ.

## ນະວັດຕະກຳ

- ໄດ້ດຳເນີນການຈັດການຝຶກອົບຮົມ ໃຫ້ແກ່ໂຮງຮຽນເປົ້າໝາຍ ແລະ ໄດ້ຮັບການຊຸກຍູ້ຊ່ວຍເຫຼືອການພັດທະນາວິຊາການທີ່ກ່ຽວຂ້ອງກັບການວາງແຜນ, ການຄຸ້ມຄອງ ແລະ ພາວະການເປັນຜູ້ນຳຄຽງຄູ່ກັບການຍົກສູງຄຸນນະພາບການສຶກສາ.








## ຜົນໄດ້ຮັບ

- ຈາກການປະເມີນຂອງພະແນກສຶກສາທິການ ແລະ ກິລາແຂວງ ໃຫ້ຮູ້ວ່າ ໃນຕອນຕົ້ນຂອງໂຄງການ ມີພຽງ 17% ຂອງຫ້ອງການສຶກສາທິການ ແລະ ກິລາເມືອງ ໄດ້ມີແຜນພັດທະນາການສຶກສາທີ່ມີຄຸນນະພາບດີ ແລະ ໄດ້ມີການເພີ່ມຂຶ້ນເປັນ 88% ໃນຕອນທ້າຍຂອງໂຄງການ
- ອີງຕາມການປະເມີນຈາກພະແນກສຶກສາທິການ ແລະ ກິລາແຂວງ ໃນເບື້ອງຕົ້ນມີພຽງແຕ່ 6% ຂອງຈຳນວນໂຮງຮຽນທັງໝົດ ທີ່ມີການວາງແຜນພັດທະນາການສຶກສາທີ່ດີ ແລະ ສາມາດເພີ່ມຂຶ້ນເປັນ 89% ໃນຕອນທ້າຍໂຄງການ
- ຊຸມຊົນຂອງໂຮງຮຽນໄດ້ມີການເຂົ້າຮ່ວມຢ່າງເຕັມສ່ວນໃນການວາງແຜນພັດທະນາໂຮງຮຽນ ແລະ ການຈັດຕັ້ງປະຕິບັດກິດຈະກຳຜ່ານການລະດົມທຶນງົບປະມານ ແລະ ການເຮັດໂຄງການ. ລວມເປັນມູນຄ່າທັງໝົດ 826,050,000 ກີບ ໃນທົ່ວທຸກໂຮງຮຽນ ເພື່ອເປັນການສ້ອມແປງໂຮງຮຽນຕາມຄວາມຈຳເປັນ ແລະ ເໝາະສົມເຊັ່ນ: ປ້າຍ, ຮົ້ວໂຮງຮຽນ, ສ້ອມແປງອາຄານຮຽນ, ປັບເດີ່ນ, ເຄື່ອງຫຼິ້ນ, ເຄື່ອງໃຊ້ຫ້ອງການ ແລະ ອຸປະກອນຕ່າງໆ
- ໂຮງຮຽນທັງໝົດໄດ້ມີການປັບປຸງການຄຸ້ມຄອງບໍລິຫານດ້ານການເງິນ ແລະ ການຄຸ້ມຄອງຂໍ້ມູນບຸກຄະລາກອນ.

## ແຜນຕໍ່ໜ້າ

- ຜູ້ອຳນວຍການໂຮງຮຽນ ໃນໂຮງຮຽນເປົ້າໝາຍທີ່ມີສ່ວນຮ່ວມໃນການທົດລອງ ມີຄວາມເຫັນດີທີ່ຈະສືບຕໍ່ນຳໃຊ້ວິທີການທີ່ໄດ້ຮັບການພັດທະນາຂຶ້ນມາ
- ຫ້ອງການສຶກສາທິການ ແລະ ກິລາເມືອງ ຈະນຳເອົາເນື້ອໃນຄູ່ມືລົງແນະນຳ ແລະ ຜັນຂະຫຍາຍຕໍ່ໂຮງຮຽນອື່ນໆ.

# ສ້າງຄວາມເຂັ້ມແຂງໃຫ້ຊຸມຊົນ ຊົນເຜົ່າເປັນເຈົ້າການ ໃນການພັດທະນາການສຶກສາ

ສະມາຄົມພັດທະນາທັກສະຊີວິດ (ສພຊ)

ເມືອງວຽງໄຊ, ແຂວງຫົວພັນ
ເມືອງລອງ, ແຂວງຫຼວງນ້ຳທາ

24 ເດືອນ

ກີບ 984,080,000



## ສິ່ງທ້າທາຍທີ່ຕ້ອງໄດ້ແກ້ໄຂ

- ຂາດການປະກອບສ່ວນຂອງ ຄະນະພັດທະນາການສຶກສາຂັ້ນບ້ານ ໃນການສະໜັບສະໜູນສະພາບແວດລ້ອມໃນໂຮງຮຽນ ແລະ ການພັດທະນາໂຮງຮຽນໃນຊຸມຊົນຂອງເຂົາ
- ຄະນະພັດທະນາການສຶກສາຂັ້ນບ້ານ ຍັງບໍ່ທັນໄດ້ຮັບການແນະນຳ ຫຼື ຮັບການຝຶກອົບຮົມຢ່າງພຽງພໍ; ເຊິ່ງສ່ວນຫຼາຍມີແຕ່ຜູ້ອຳນວຍການໂຮງຮຽນເປັນສະມາຊິກຫຼັກໃນວຽກງານພັດທະນາການສຶກສາ.

## ເປົ້າໝາຍ

- ວຽກງານວາງແຜນ ແລະ ການຄຸ້ມຄອງການພັດທະນາການສຶກສາ ແລະ ສົ່ງເສີມການມີສ່ວນຮ່ວມຂອງຊຸມຊົນໄດ້ມີການປັບປຸງໃຫ້ດີຂຶ້ນ.

## ຈຸດປະສົງ

- ສ້າງຄວາມເຂັ້ມແຂງ ແລະ ຄວາມພ້ອມໃຫ້ແກ່ ຄະນະພັດທະນາການສຶກສາຂັ້ນບ້ານ ເພື່ອໃຫ້ການຊຸກຍູ້ການສຶກສາທີ່ມີຄຸນນະພາບຢູ່ໃນຊຸມຊົນ
- ສ້າງ ແລະ ພັດທະນາແຜນການຈັດຕັ້ງປະຕິບັດການພັດທະນາການສຶກສາປະຈຳບ້ານ ໃນຮູບແບບການປຶກສາຫາລື ແລະ ການມີສ່ວນຮ່ວມ
- ຜັນຂະຫຍາຍການຄົ້ນຄວ້າວິໄຈຮູບແບບການປະຕິບັດທີ່ມີສ່ວນຮ່ວມໃນຊຸມຊົນອື່ນໃນຂອບເຂດເມືອງວຽງໄຊ ແລະ ເມືອງລອງ.

## ນະວັດຕະກຳ

- ແນະນຳການຄົ້ນຄ້ວາວິໄຈຮູບແບບການປະຕິບັດທີ່ມີສ່ວນຮ່ວມໃຫ້ແກ່ຄະນະພັດທະນາສຶກສາຂັ້ນບ້ານ ເພື່ອຍົກລະດັບການມີສ່ວນຮ່ວມຢ່າງຫ້າວຫັນຂອງສະມາຊິກຊຸມຊົນເຂົ້າໃນວຽກພັດທະນາການສຶກສາ
- ການຮ່ວມມືລະຫວ່າງສະມາຄົມພັດທະນາທັກສະຊີວິດ (ສະມາຄົມບໍ່ຫວັງຜົນກຳໄລ), ວິທະຍາໄລສ້າງຄູ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ຄະນະພັດທະນາການສຶກສາຂັ້ນບ້ານ ແລະ ສະມາຊິກຊຸມຊົນ.








## ຜົນໄດ້ຮັບ

- ຄະນະພັດທະນາສຶກສາຂັ້ນບ້ານໃນຊຸມຊົນເປົ້າໝາຍທັງ 12 ແຫ່ງໄດ້ນຳໃຊ້ການຄົ້ນຄ້ວາວິໄຈຮູບແບບການປະຕິບັດທີ່ມີສ່ວນຮ່ວມ ເປັນພື້ນຖານຂອງການສ້າງແຜນພັດທະນາການສຶກສາໃນໂຮງຮຽນ ແລະ ເຂົ້າຮ່ວມຢ່າງຫ້າວຫັນໃນກອງປະຊຸມເປັນປະຈຳ ເພື່ອການຕິດຕາມຄວາມຄືບໜ້າ
- ແຜນພັດທະນາການສຶກສາໃນໂຮງຮຽນໄດ້ຮັບໂຮມມີໂຄງການຍ່ອຍຫຼາກຫຼາຍ ເປັນຕົ້ນແມ່ນການສ້າງສວນຄົວໂຮງຮຽນ ແລະ ການສອນໜັງສືໃນໄລຍະພັກແລ້ງ ສຳລັບນັກຮຽນທີ່ຜົນການຮຽນຕໍ່າ.

## ແຜນຕໍ່ໜ້າ

- ເມືອງວຽງໄຊ ມີແຜນຜັນຂະຫຍາຍແນວທາງການຈັດຕັ້ງປະຕິບັດໂຄງການນີ້ໃນບັນດາໝູ່ບ້ານອື່ນ
- ວິທະຍາໄລສ້າງຄູດົງຄຳຊ້າງ ໄດ້ວາງແຜນ ເພື່ອຊອກຫາວິທີທາງໃນການແຊກຊ້ອນວິທີການຄົ້ນຄ້ວາວິໄຈນີ້ເຂົ້າໃນແຜນບຳລຸງຄູ.

# ການຮຽນຜ່ານກະຕູນບັນເທີງສຶກສາໃນການແກ້ໄຂສິ່ງທ້າທາຍດ້ານການສຶກສາ

Clay House Studio

ເມືອງຕະໂອ້ຍ, ແຂວງສາລະວັນ
ເມືອງພູວົງ, ແຂວງອັດຕະປື

24 ເດືອນ

ກີບ 1,079,280,000

## ສິ່ງທ້າທາຍທີ່ຕ້ອງໄດ້ແກ້ໄຂ

- ເດັກຕ້ອງໄດ້ຊ່ວຍວຽກພໍ່ແມ່ຢູ່ເຮືອນ ຫຼື ຢູ່ໄຮ່ຢູ່ນາ ເຮັດໃຫ້ເດັກນ້ອຍບໍ່ສາມາດມາໂຮງຮຽນເປັນປົກກະຕິໄດ້.

## ເປົ້າໝາຍ

- ປັບປຸງທັດສະນະຄະຕິ ແລະ ຄວາມຫ້າວຫັນຂອງເດັກນ້ອຍຕໍ່ການຮໍ່າຮຽນ.

## ຈຸດປະສົງ

- ເພີ່ມຄວາມເຂົ້າໃຈເຖິງຄວາມສໍາຄັນຂອງການເຂົ້າຮຽນເປັນປົກກະຕິ
- ເພີ່ມການປູກຈິດສໍານຶກເຖິງຄວາມສໍາຄັນຂອງການຮູ້ໜັງສື
- ພັດທະນາທັກສະຊີວິດເຊັ່ນ ຂົງເຂດໂພສະນາການ, ສຸຂະພາບ ແລະ ຄວາມປອດໄພ
- ການສອນຄໍາສັບພາສາລາວ
- ປັບປຸງການຮຽນຮ່ວມຂອງເດັກທີ່ດ້ອຍໂອກາດ.

## ນະວັດຕະກໍາ

- ເປັນການແນະນໍາ "ການໃຊ້ສື່ບັນເທີງເພື່ອການສຶກສາ" ເປັນວິທີການສ້າງຄວາມມ່ວນຊື່ນໃນການຮຽນຮູ້
- ຜະລິດລາຍການຮຽນຮູ້ຮ່ວມກັນ ໂດຍການນໍາໃຊ້ສື່ເນື້ອໃນຫຼາຍຮູບແບບປະສົມປະສານກັບການເລົ່າເລື່ອງ, ກາຕູນດິນປັ້ນ ແລະ ຮູບພາບເຄື່ອນໄຫວ.








## ຜົນໄດ້ຮັບ

- ສື່ການຮຽນການສອນເສີມ ໄດ້ຖືກດັດປັບໃຫ້ແທດເໝາະກັບວັດທະນະທຳ, ສະພາບແວດລ້ອມ ແລະ ປະຫວັດຄວາມເປັນມາຂອງຂົງເຂດທີ່ເຮັດການທົດລອງ ເຊິ່ງລວມທັງປຶ້ມກິດຈະກຳຂອງນັກຮຽນ, ແຜ່ນເລື່ອງນິທານ, ບັດຄຳສັບ ແລະ ລາຍການໂທລະພາບ "ຮຽນຮູ້ຮ່ວມກັນ" ທັງ 6 ຕອນ.
- ຄູຈຳນວນ 37 ທ່ານ ໄດ້ຮັບການຝຶກອົບຮົມ ເພື່ອນຳໃຊ້ສື່ການຮຽນການສອນໃນຫ້ອງຮຽນ ແລະ ນັກຮຽນຈຳນວນ 996 (ເດັກຍິງ 473) ຄົນ ໄດ້ມີສ່ວນຮ່ວມໃນກິດຈະກຳນີ້ ແລະ ອັດຕາການເຂົ້າຮຽນໄດ້ເພີ່ມຂຶ້ນ ໃນ 06 ໂຮງຮຽນເປົ້າໝາຍໃນ 02 ເມືອງທີ່ເຮັດການທົດລອງ
- ຄວາມສົນໃຈ ແລະ ຄວາມກະຕືລືລົ້ນຢ່າງລົ້ນເຫຼືອກ່ຽວກັບບົດກາຕູນນີ້ ໄດ້ນຳໄປສູ່ການຖ່າຍທອດຟຣີຜ່ານຫຼາຍຊ່ອງທາງໂທລະພາບ
- ການໃຊ້ສື່ບັນເທີງເພື່ອການສຶກສາ ມີທ່າອ່ຽງທີ່ດີໃນການດຶງດູດຄວາມສົນໃຈຂອງຜູ້ຊົມໄວໜຸ່ມ ແລະ ໄດ້ສະໜັບສະໜູນການປ່ຽນແປງພຶດຕິກຳ ແລະ ທັດສະນະຄະຕິດ້ານບວກ.

## ແຜນຕໍ່ໜ້າ

- ລາຍການ "ຮຽນຮູ້ຮ່ວມກັນ" ໄດ້ຖືກຜັນຂະຫຍາຍ ໃນການຊ່ວຍສະໜັບສະໜູນການນຳໃຊ້ຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່ ຊັ້ນປ.1
- ກຳລັງຜະລິດເລື່ອງເພີ່ມອີກ 15 ຕອນ ເພື່ອໃຫ້ແທດເໝາະກັບຫຼັກສູດສະບັບປັບປຸງໃໝ່ ເຊິ່ງເລີ່ມຖ່າຍທອດທາງອາກາດແຕ່ເດືອນ ສິງຫາ 2019.

# ເສີມສ້າງແຮງບັນດານໃຈດ້ານການສຶກສາ ແລະ ສົ່ງເສີມການຮູ້ໜັງສື ໂດຍການສ້າງຄວາມໝັ້ນໃຈ ແລະ ທັກສະຄວາມເປັນຜູ້ນໍາ

ອົງການຊ່ວຍເຫຼືອເດັກ (ChildFund Organization)

ເມືອງຄູນ, ແຂວງຊຽງຂວາງ

14 ເດືອນ

ກີບ 443,256,000



## ສິ່ງທ້າທາຍທີ່ຕ້ອງໄດ້ແກ້ໄຂ

- ອັດຕາການຈົບຊັ້ນປະຖົມສຶກສາຍັງຕໍ່າ, ອັດຕາການເຂົ້າຮຽນຊັ້ນມັດທະຍົມສຶກສາຍັງຕໍ່າ ຂອງກຸ່ມນັກຮຽນຍິງຊົນເຜົ່າໃນເຂດຫ່າງໄກສອກຫຼີກ ແລະ ເຂດພູດອຍໃນປະເທດລາວ.

## ເປົ້າໝາຍ

- ເພີ່ມອັດຕາການຮຽນຕໍ່ໃນຊັ້ນມັດທະຍົມສຶກສາຂອງນັກຮຽນຍິງ.

## ຈຸດປະສົງ

- ເພີ່ມທັກສະການອ່ານ ແລະ ການຂຽນ ຂອງນັກຮຽນຍິງຊົນເຜົ່າ.
- ເສີມສ້າງຄວາມໝັ້ນໃຈໃນຕົນເອງ, ມີຄວາມກ້າຫານໃນການປະກອບຄໍາຄິດເຫັນ ແລະ ກ້າຕັດສິນໃຈດ້ວຍຕົນເອງ
- ສ້າງຄວາມຕັ້ງໃຈ ແລະ ທຸ່ມເທຂອງພໍ່ແມ່ໃນການສະໜັບສະໜູນເດັກຍິງໃຫ້ໄດ້ຮັບການສຶກສາ.

## ນະວັດຕະກໍາ

- ໄດ້ປະສົມປະສານການສອດແຊກຄວາມຮູ້ທີ່ໜັກແໜ້ນໃນຫ້ອງຮຽນພາສາລາວ ເຂົ້າກັບອົງປະກອບຂອງທັກສະຊີວິດໃນການສ້າງຄວາມນັບຖືຕົນເອງ, ຄວາມໝັ້ນໃຈ ແລະ ຄວາມເປັນຜູ້ນໍາ ແລະ ຄວາມເອົາໃຈໃສ່ຂອງພໍ່ແມ່ນັກຮຽນຕໍ່ການສຶກສາ
- ພັດທະນາສື່ການຮຽນການສອນອັນສະເພາະ ເພື່ອຄວາມແທດເໝາະກັບສະພາບ ແລະ ວັດທະນະທໍາຂອງທ້ອງຖິ່ນ ເພື່ອເຮັດໃຫ້ວຽກງານສຶກສາມີຄວາມພົ້ນເດັ່ນໃນຊຸມຊົນເປົ້າໝາຍ.







## ຜົນໄດ້ຮັບ

- ຜົນການຮຽນຂອງນັກຮຽນໃນໂຮງຮຽນເປົ້າໝາຍທັງ 4 ໂຮງຮຽນແມ່ນດີຂຶ້ນ ໃນທັກສະການນຳໃຊ້ພາສາລາວ ທັງ 4 ຂົງເຂດ (ການອ່ານ, ການຂຽນ, ການຟັງ ແລະ ການເວົ້າ)
- ນັກຮຽນມີຄວາມມ່ວນຊື່ນໃນການເຂົ້າຮ່ວມກິດຈະກຳການຮຽນການສອນທີ່ຫຼາກຫຼາຍ ແລະ ສ້າງຄວາມໝັ້ນໃຈຂອງເຂົາເຈົ້າ. ພວກເຂົາມີຄວາມກະຕືລືລົ້ນໃນກິດຈະກຳສົ່ງເສີມການອ່ານ ເພາະພວກເຂົາໄດ້ຖືປຶ້ມອ່ານຫຼາຍແບບມາໂຮງຮຽນ ແລະ ຍ້ອນການເຂົ້າຮ່ວມຂອງຊຸມຊົນ
- ໄດ້ພັດທະນາສາຍພົວພັນໃນການເປັນຄູ່ຮ່ວມງານລະດັບສູງ ລະຫວ່າງອົງການຊ່ວຍເຫຼືອເດັກ (ChildFund) ແລະ ການຈັດຕັ້ງພະແນກສຶກສາທິການ ແລະ ກິລາ ແຂວງຊຽງຂວາງ ແລະ ຫ້ອງການສຶກສາທິການ ແລະ ກິລາ ເມືອງຄູນ ຕະຫຼອດໄລຍະການດຳເນີນໂຄງການ.

## ແຜນຕໍ່ໜ້າ

- ອົງການຊ່ວຍເຫຼືອເດັກ (ChildFund) ສືບຕໍ່ຈັດຕັ້ງປະຕິບັດກິດຈະກຳນີ້ອອກໄປອີກ 6 ເດືອນ ພາຍຫຼັງການສິ້ນສຸດໂຄງການ ເພື່ອສັງລວມຜົນສຳເລັດ ແລະ ເພື່ອຂະຫຍາຍເວລາແກ່ໃນການນຳໃຊ້ບົດຮຽນທັກສະຊີວິດນີ້ໃຫ້ເກີດຜົນປະໂຫຍດສູງສຸດ.
- ນັກຮຽນສືບຕໍ່ຮຽນຮູ້ຢ່າງມ່ວນຊື່ນໃນການເຮັດກິດຈະກຳທັກສະຊີວິດ ແລະ ພັດທະນາທັກສະໃໝ່ ຕະຫຼອດໄລຍະຂອງການມີສ່ວນຮ່ວມ
- ພໍ່ແມ່ນັກຮຽນມີຄວາມສະໜັບສະໜູນຕໍ່ການມີສ່ວນຮ່ວມໃນວຽກງານສຶກສາຂອງເດັກນ້ອຍຫຼາຍກວ່າເກົ່າ ແລະ ໄດ້ມີການຊຸກຍູ້ການເຂົ້າຮ່ວມເຮັດກິດຈະກຳສົ່ງເສີມທັກສະຊີວິດ
- ອົງການຊ່ວຍເຫຼືອເດັກ (ChildFund) ກຳລັງທົບທວນແຜນກິດຈະກຳ ເພື່ອເພີ່ມຂີດຄວາມສາມາດ ແລະ ສ້າງສິ່ງຈູງໃຈໃຫ້ແກ່ບັນດາຜູ້ສອນໃນຊຸມຊົນ ເພື່ອເຮັດໃຫ້ໂຄງການນີ້ປະສົບຜົນສຳເລັດໃນອະນາຄົດ.

# ໂຄງການເລື່ອງເລົ່າພື້ນເມືອງ ຊາວແລນແຕນ

ການຮ່ວມມືລະຫວ່າງຫໍສະໝຸດແຫ່ງຊາດລາວ, ມະຫາວິທະຍາໄລມູນເຊີ
ແລະ ມະຫາວິທະຍາໄລທ້ອງກິ່ງ

ແຂວງຫຼວງນໍ້າທາ

27 ເດືອນ

ກີບ 550,000,000

## ສິ່ງທ້າທາຍທີ່ຕ້ອງໄດ້ແກ້ໄຂ

- ບັນທຶກນິດເລື່ອງຂອງເຜົ່າແລນແຕນ ເຊິ່ງມີຄວາມສ່ຽງທີ່ຈະຫາຍສາບສູນ ເນື່ອງຈາກອິດທິພົນຂອງສື່ບັນເທີງຂອງຍຸກສະໄໝໃໝ່ ແລະ ຈຳນວນຂອງຜູ້ເລົ່າເລື່ອງທີ່ຫຼຸດລົງ
- ສົ່ງເສີມອັດຕາການຮູ້ໜັງສືພາສາລາວຂອງຊຸມຊົນເຜົ່າແລນແຕນ, ໂດຍສະເພາະກຸ່ມຜູ້ຍິງ ແລະ ເດັກນ້ອຍ ຊຶ່ງມີອັດຕາການອ່ານອອກຂຽນໄດ້ຕ່ຳ.

## ເປົ້າໝາຍ

- ເພີ່ມອັດຕາການຮູ້ໜັງສື ແລະ ການສ້າງສື່ການສຶກສາຮຽນຮ່ວມສຳລັບເດັກນ້ອຍ.

## ຈຸດປະສົງ

- ການອະນຸລັກເລື່ອງເລົ່າຂອງເຜົ່າແລນແຕນ ສຳລັບຄົນລຸ້ນໃໝ່
- ການຜະລິດສື່ການຮຽນຮູ້ທີ່ເປັນພາສາລາວ ເພື່ອດຶງດູດຄວາມສົນໃຈຂອງຊຸມຊົນເຜົ່າແລນແຕນ
- ນຳໃຊ້ສື່ອຸປະກອນເຫຼົ່ານີ້ ເພື່ອໂຄສະນາອົບຮົມການຮູ້ພາສາລາວທີ່ສຸມໃສ່ເດັກນ້ອຍ ແລະ ແມ່ຍິງ ໃນບັນດາໝູ່ບ້ານເຜົ່າແລນແຕນ ໃນພາກເໜືອຂອງປະເທດລາວ.

## ນະວັດຕະກຳ

- ເຜີຍແຜ່ເລື່ອງເລົ່າທ້ອງຖິ່ນ ເພື່ອດຶງດູດຊຸມຊົນທ້ອງຖິ່ນ, ນັກອ່ານ ແລະ ສະຖາບັນຕ່າງໆໃນການສະໜັບສະໜູນການຮູ້ໜັງສື.







## ຜົນໄດ້ຮັບ

- ໄດ້ຜະລິດຫໍສະໝຸດດິຈິຕໍລແບບສຽງ ແລະ ຮູບພາບ ຂອງເລື່ອງເລົ່າຊາວແລນແຕນທັງໝົດ 115 ເລື່ອງ ເຊິ່ງເປັນຂີດໝາຍທີ່ສຳຄັນໃນການອະນຸລັກມໍລະດົກທາງວັດທະນາທຳ
- ໄດ້ຜະລິດປຶ້ມອ່ານສຳລັບເດັກນ້ອຍທັງໝົດ 30 ເລື່ອງ
- ມີການຢ້ຽມຢາມບ້ານ 15 ແຫ່ງ ຈາກທີມງານຊ່ຽວຊານດ້ານການເລົ່າເລື່ອງ ແລະ ໜັງສືຈາກຫໍສະໝຸດແຫ່ງຊາດລາວ ດ້ວຍການນຳໃຊ້ລົດຫໍສະໝຸດເຄື່ອນທີ່. ໝູ່ບ້ານເຜົ່າແລນແຕນໃນແຂວງຫຼວງນ້ຳທາ ໄດ້ຮັບຊຸດປຶ້ມນິທານສຳລັບເດັກນ້ອຍ 2 ຊຸດ
- ມີເວຟໄຊທ໌ທີ່ມີຂໍ້ມູນຂອງໂຄງການ ແລະ ຊຸດເລື່ອງນິທານ 70 ເລື່ອງ (ປຶ້ມສຳລັບເດັກນ້ອຍ) ໄດ້ຖືກຖ່າຍທຳເປັນພາສາທ້ອງຖິ່ນ (ແລນແຕນ) ແລະ ຖືກແປເປັນພາສາລາວ ແລະ ພາສາອັງກິດ.

## ແຜນຕໍ່ໜ້າ

- ບັນທຶກສາລະຄະດີກ່ຽວກັບເຫດການດ້ານສັງຄົມຂອງຊາວແລນແຕນ ເຊິ່ງມີຂໍ້ມູນອັນລະອຽດໃນໂຄງການນີ້ ທີ່ໄດ້ຮັບການສະໜັບສະໜູນຈາກສະຫະພາບເອີລົບ
- ເລື່ອງເລົ່າຊາວແລນແຕນນີ້ໄດ້ຖືກນຳໄປສຶກສາໃນຂອບຂອງການວິໄຈປຽບທຽບແບບຕໍ່ເນື່ອງກ່ຽວກັບຊາວແລນແຕນໃນປະເທດລາວ, ຫວຽດນາມ ແລະ ຈີນ. ຜົນການສຶກສາຫຼາກຫຼາຍນີ້ມີຄາດໝາຍສຳເລັດ ໃນປີ 2020.

# ໂຄງການພັດທະນາຂີດຄວາມສາມາດໃຫ້ຄະນະເຄືອຄ່າຍການສຶກສາຮຽນຮ່ວມ ເພື່ອການເຂົ້າເຖິງການສຶກສາຊັ້ນປະຖົມສຶກສາໄດ້ງ່າຍຂຶ້ນ

ພະແນກສຶກສາທິການ ແລະ ກິລາ ແຂວງຊຽງຂວາງ

ເມືອງຄູນ ແລະ ເມືອງໝອກໃໝ່, ແຂວງຊຽງຂວາງ

20 ເດືອນ

ກີບ 275,157,500

## ສິ່ງທ້າທາຍທີ່ຕ້ອງໄດ້ແກ້ໄຂ

- ການຈັດຕັ້ງປະຕິບັດ ແລະ ຄວາມເຂົ້າໃຈທີ່ແຕກຕ່າງກັນກ່ຽວກັບການສຶກສາຮຽນຮ່ວມພາຍໃນຄະນະເຄືອຂ່າຍໃນລະດັບພະແນກສຶກສາທິການ ແລະ ກິລາ, ຫ້ອງການສຶກສາທິການ ແລະ ກິລາເມືອງ
- ຂາດຄວາມຮູ້ ແລະ ທັກສະໃນການນໍາໃຊ້ວິທີການສອນການສຶກສາຮຽນຮ່ວມໃນຫ້ອງຮຽນ
- ບັນຫາເດັກພິການ ຫຼື ເດັກທີ່ດ້ອຍໂອກາດບໍ່ສາມາດເຂົ້າເຖິງການສຶກສາໃນໂຮງຮຽນໄດ້.

## ເປົ້າໝາຍ

- ສົ່ງເສີມການເຂົ້າເຖິງການສຶກສາຊັ້ນປະຖົມ ແລະ ການເຂົ້າຮ່ວມການສຶກສາຂອງເດັກທີ່ດ້ອຍໂອກາດ.

## ຈຸດປະສົງ

- ສ້າງຂີດຄວາມສາມາດ ແລະ ຄວາມເຂົ້າໃຈກ່ຽວກັບນະໂຍບາຍ ແລະ ກົດລະບຽບຂອງການສຶກສາຮຽນຮ່ວມ ແລະ ການຈັດຕັ້ງປະຕິບັດໃຫ້ເກີດຜົນຕົວຈິງໃນລະດັບພະແນກສຶກສາທິການ ແລະ ກິລາ, ຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ລະດັບໂຮງຮຽນ
- ສະໜັບສະໜູນການຝຶກອົບຮົມ ແລະ ການຕິດຕາມຊຸກຍູ້ໃຫ້ແກ່ໂຮງຮຽນ ເພື່ອຮັບປະກັນການຈັດຕັ້ງປະຕິບັດນະໂຍບາຍການສຶກສາຮຽນຮ່ວມທີ່ສະທ້ອນໃຫ້ເຫັນໃນແຜນໃນການວາງແຜນພັດທະນາໂຮງຮຽນ ແລະ ການຈັດການຮຽນການສອນຕົວຈິງ
- ປູກຈິດສໍານຶກກ່ຽວກັບສິດທິຂອງເດັກນ້ອຍທຸກຄົນໃນການເຂົ້າເຖິງການສຶກສາຕ້ອງໄດ້ຮັບການການສຶກສາ ແລະ ຊ່ວຍກັນລະດົມພໍ່ແມ່ ແລະ ຜູ້ປົກຄອງໃຫ້ລູກຫຼານໄດ້ເຂົ້າຮຽນຢ່າງເປັນປົກກະຕິ.





## ນະວັດຕະກຳ

- ສ້າງຂີດຄວາມສາມາດດ້ານການສຶກສາຮຽນຮ່ວມໃນທຸກລະດັບເພື່ອສ້າງເຄືອຂ່າຍຄວາມເຂົ້າໃຈ ແລະ ໄດ້ຮັບການສະໜັບສະໜູນນັບແຕ່ລະດັບໂຮງຮຽນຫາລະດັບແຂວງ
- ແນະນຳໃຫ້ຄູເຂົ້າໃຈການຈັດຕັ້ງປະຕິບັດການສຶກສາຮຽນຮ່ວມ ທີ່ພວກເຂົາຍັງບໍ່ໄດ້ຮັບການຝຶກອົບຮົມໃນຜ່ານມາ
- ຊຸກຍູ້ ແລະ ສະໜັບສະໜູນໃຫ້ມີຄວາມເຂົ້າໃຈຕໍ່ການສຶກສາຮຽນຮ່ວມໃຫ້ກວ້າງຂວາງ ແລະ ເປັນເອກະພາບກັນ ເພື່ອຊ່ວຍເດັກດ້ອຍໂອກາດທຸກຄົນເນື່ອງຈາກຄວາມທຸກຍາກ ແລະ ຊົນເຜົ່າ ລວມທັງຄວາມພິການ.

## ຜົນໄດ້ຮັບ

- ເພີ່ມການລົງທະບຽນເຂົ້າຮຽນ ແລະ ການມາຮຽນຂອງເດັກດ້ອຍໂອກາດໃນໂຮງຮຽນເປົ້າໝາຍ, ລວມທັງເດັກທີ່ມີຄວາມພິການ, ເດັກຈາກຄອບຄົວທຸກຍາກ ແລະ ເດັກຈາກກຸ່ມຊົນເຜົ່າ
- ໄດ້ນຳສະເໜີວິທີການສອນການສຶກສາຮຽນຮ່ວມ ເພື່ອຮັບປະກັນເດັກດ້ອຍໂອກາດໄດ້ຮັບການສະໜັບສະໜູນເພີ່ມເຕີມ
- ຫ້ອງຮຽນ ແລະ ໂຮງຮຽນໄດ້ຮັບການປັບປຸງ ເພື່ອການເຂົ້າເຖິງໄດ້ງ່າຍຂຶ້ນ
- ພະແນກສຶກສາທິການ ແລະ ກິລາ ໄດ້ປະສານງານລະຫວ່າງພໍ່ແມ່/ຜູ້ປົກຄອງນັກຮຽນທີ່ມີຄວາມພິການ ແລະ ພາກສ່ວນຊ່ວຍເຫຼືອຄົນພິການ ເພື່ອເພີ່ມການເຂົ້າເຖິງການສຶກສາຂອງພວກເຂົາເຈົ້າໃນການໄດ້ຮັບການປິ່ນປົວ ແລະ ການຊ່ວຍເຫຼືອຈາກຜູ້ຊ່ຽວຊານ
- ພະແນກສຶກສາທິການ ແລະ ກິລາ ໄດ້ຈັດສັນທຶນງົບປະມານເພີ່ມ ເພື່ອຜັນຂະຫຍາຍການຝຶກອົບຮົມໃຫ້ແກ່ຄູຫຼາຍຄົນໄປຍັງຄູ ແລະ ໂຮງຮຽນອື່ນໆ ທີ່ບໍ່ໄດ້ນອນຢູ່ໃນເປົ້າໝາຍຂອງໂຄງການ.

## ແຜນຕໍ່ໜ້າ

- ສຳລັບເມືອງເປົ້າໝາຍທີ່ໄດ້ດຳເນີນໂຄງການນີ້ຈະສືບຕໍ່ຜັນຂະຫຍາຍວິທີການສິດສອນ ແລະ ສື່ອຸປະກອນສຳລັບການສຶກສາຮຽນຮ່ວມໄປຍັງໂຮງຮຽນທີ່ຍັງບໍ່ທັນໄດ້ຈັດຕັ້ງປະຕິບັດເທື່ອ
- ພະແນກສຶກສາທິການ ແລະ ກິລາແຂວງ ຈະສືບຕໍ່ລົງຕິດຕາມຊຸກຍູ້ຂັ້ນເມືອງ ແລະ ຂັ້ນໂຮງຮຽນໃນການຈັດຕັ້ງປະຕິບັດການຮຽນການສອນການສຶກສາຮຽນຮ່ວມ
- ພະແນກສຶກສາທິການ ແລະ ກິລາ ແຂວງຈະສືບຕໍ່ຊອກຫາງົບປະມານມາຮັບໃຊ້ການຝຶກອົບຮົມໃຫ້ຄູສອນທຸກຄົນໃນໂຮງຮຽນເປົ້າໝາຍ ເພື່ອການສິ່ງຄວາມຮູ້ໃຫ້ເດັກທີ່ຕ້ອງການຄວາມຊ່ວຍເຫຼືອພິເສດ ແລະຊອກຫາງົບປະມານໃນການປັບປຸງພື້ນຖານໂຄງລ່າງທີ່ຈຳເປັນໃນການອຳນວຍຄວາມສະດວກໃຫ້ແກ່ເດັກພິການໄດ້ເຂົ້າເຖິງງ່າຍຂຶ້ນ ແລະ ຊອກຫາງົບປະມານ ແລະ ທຶນຮອນທີ່ນຳໃຊ້ເຂົ້າໃນການຮຽນຂອງເດັກທີ່ມາຈາກຄອບຄົວທຸກຍາກ/ມີບັນຫາທາງດ້ານການເງິນ.

ແຜນງານບີຄວາ ແມ່ນແຜນງານທີ່ນຳພາໂດຍລັດຖະບານແຫ່ງ ສປປ ລາວ,
ໂດຍການສະໜັບສະໜູນຈາກລັດຖະບານ ອົດສະຕຣາລີ ແລະ ສະຫະພາບເອີຣົບ